ທຄຕລ BCEL

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

# BCEL OneHeart

## ໄດ້ຮັບລາງວັນຊະນະເລີດໃນງານແຂ່ງຂັນລະດັບຊາດ Lao ICT Award 2018

BCEL OneHeart ຍາດໄດ້ລາງວັນຊະນະເລີດໃນງານແຂ່ງຂັນລະດັບປະເທດ Lao ICT Award 2018 ເຊິ່ງໄດ້ຈັດຂຶ້ນໃນວັນທີ 07/07/2018 ຜ່ານມານີ້ ຢູ່ທີ່ ຫໍວັດທະນາທຳແຫ່ງຊາດ ນະຄອນຫຼວງວຽງຈັນ. ການເຂົ້າຮ່ວມແຂ່ງຂັນໃນຄັ້ງນີ້ມີຫຼາຍກວ່າ 20 ທີມ, ເຊິ່ງມີພຽງ 9 ທີມເທົ່ານັ້ນທີ່ໄດ້ເຂົ້າຮອບສຸດທ້າຍ ໜຶ່ງໃນນັ້ນແມ່ນຜະລິດຕະພັນ BCEL OneHeart ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຜ່ານການແຂ່ງຂັນ BCEL OneHeart ສາມາດຍາດໄດ້ລາງວັນຊະນະເລີດ. ຫຼັງຈາກນັ້ນ ກະຊວງໄປສະນີໂທລະຄົມ ແລະ ການສື່ສານ ຈະໄດ້ມີການຄັດເລືອກເອົາທີມທີ່ເປັນຕົວແທນຂອງປະເທດລາວເພື່ອເຂົ້າແຂ່ງຂັນໃນລາຍການ ASEAN ICT Awards ເຊິ່ງຈະຈັດຂຶ້ນໃນທ້າຍປີ 2018 ນີ້ ຢູ່ທີ່ ປະເທດອິນໂດເນເຊຍ.




ງານປະກວດ Lao ICT Award ໃນປີນີ້ແມ່ນເປັນປີທີ II ຈັດຂຶ້ນໂດຍ ກະຊວງໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ (ປທສ) ໂດຍມີຈຸດປະສົງເພື່ອເປັນການສະໜັບສະໜູນບັນດາບຸກຄົນ ຫຼື ພາກສ່ວນຕ່າງໆ ໄດ້ມີໂອກາດສະແດງຜົນງານ, ຄວາມສາມາດທາງດ້ານ ICT ຂອງຕົນ ພ້ອມທັງເປັນການສົ່ງເສີມຜົນງານ ICT ຂອງລາວ ເຂົ້າຮ່ວມແຂ່ງຂັນໃນເວທີພາກພື້ນອາຊຽນກໍຄືໂຄງການ ASEAN ICT Award.

BCEL OneHeart ເປັນຜະລິດຕະພັນທີ່ ທຄຕລ ມີຄວາມຕັ້ງໃຈນຳໃຊ້ເທັກໂນໂລຢີທີ່ທັນສະໄໝເຂົ້າໃນວຽກງານຊ່ວຍເຫຼືອສັງຄົມໂດຍບໍ່ຫວັງຜົນກຳໄລ ແລະ ບໍ່ມີຄ່າທຳນຽມ ການບໍລິຈາກກໍ່ງ່າຍ, ເຊິ່ງຈະຊ່ວຍໃຫ້ຜູ້ຫຍຸ້ງຍາກໄດ້ຮັບການຊ່ວຍເຫຼືອຕາມຄວາມເໝາະສົມ, ຜູ້ທີ່ບໍລິຈາກກໍ່ມີຄວາມໝັ້ນໃຈໄດ້ວ່າການບໍລິຈາກຂອງຕົນຈະເຖິງມືຜູ້ຕ້ອງການຄວາມຊ່ວຍເຫຼືອແທ້.

ນັບແຕ່ BCEL OneHeart ໄດ້ເປີດໂຕໃນເດືອນ 12/2017 ເປັນຕົ້ນມາ ມີຜູ້ໄດ້ຮັບຜົນປະໂຫຍດຫຼາຍກວ່າ 1.000 ຄົນ, ລວມຍອດເງິນບໍລິຈາກທັງໝົດຫຼາຍກວ່າ 170 ລ້ານກີບ, ແລະ ມີລາຍການຮ່ວມບໍລິຈາກຫຼາຍກວ່າ 2.600 ຄັ້ງ. ໃນຕໍ່ໜ້າ BCEL ຈະສືບຕໍ່ພັດທະນາ BCEL OneHeart ໃຫ້ຂະຫຍາຍຕົວຂຶ້ນໄປເລື້ອຍໆ.

OneHeart ຂໍເປັນສ່ວນໜຶ່ງໃນການປະກອບສ່ວນຊ່ວຍເຫຼືອສັງຄົມເພື່ອໃຫ້ສັງຄົມໄດ້ຮັບຜົນປະໂຫຍດສູງສຸດ.

BCEL OneHeart ຫົວໃຈດຽວກັນ


OneHeart
ເປັນສື່ກາງໃນການຊ່ວຍເຫຼືອສັງຄົມ
BCEL One

unitel
yula.la
BLUEGRASS
LAO TELECOM
SILVER
ALO!

LICA
LICTA
2018
Lao ICT Award 2018
PetroTrade
unitel
yula.la
1,000,000
5,000,000

PetroTrade
unitel
yula.la
LICA
LICTA
2018


ຮ່ວມຈັດໂດຍ: ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ
ແລະ ສະມາຄົມການຄ້າໄອຊີທີລາວ
ງານແຂ່ງຂັນຜະລິດຕະພັນໄອຊີທີລາວລະດັບປະເທດຄັ້ງທີ 2
Lao ICT Award 2018
LICA
LICTA
ລາງວັນຊະນະເລີດ
Lao ICT Award 2018 ລະດັບປະເທດ ຄັ້ງທີ 2
8,000,000


ກໍາພ້າ ນາງງາ
Kampha and Ivory Princess
BCEL One heart
oneheart.la